## ຂ້ອຍຈະມີການຄຸ້ມກັນດົນນານປານໃດ?

ຖ້າຫາກວ່າທ່ານມີສິດໄດ້ຮັບ Family Planning Only ເທົ່ານັ້ນ,ການຄຸ້ມກັນຈະດົນນານຮອດ **12** ເດືອນຫລັງຈາກການອະນຸມັດຂອງທ່ານບໍ່ກ່ຽວນຳການປ່ຽນແປງໃນຣາຍໄດ້.

## ຂ້ອຍຈະເຮັດຫຍັງແດ່ເມື່ອເວລາການຄຸ້ມກັນຂອງຂ້ອຍຈົບລົງ?

ທ່ານສາມາດຮ້ອງຂໍເອົາການຄຸ້ມກັນ Family Planning Only ໃຫມ່ອີກຫລັງຈາກທີ່ທ່ານໄດ້ຮັບໃບແຈ້ງການທາງໄປສະນີວ່າການຄຸ້ມກັນຂອງທ່ານຈະຈົບລົງ.

ຖ້າຫາກວ່າທ່ານມີການປ່ຽນແປງໃນຣາຍໄດ້ຫລືຂະນາດຂອງຄອບຄົວ,ທ່ານອາດຈະມີເງື່ອນໄຂໄດ້ຮັບການຄຸ້ມກັນ Apple Health ຟຣີຫລືຣາຄາຕ່ຳ.

## ການຄຸ້ມກັນ **Apple Health (Medicaid)** ຍັງຈະລວມເອົາການບໍຣິການວາງແຜນຄອບຄົວບໍ່?

ແມ່ນ. Apple Health ເອົາການຄຸ້ມກັນຄົບຊຸດໃຫ້ພ້ອມທັງສະວັດດີການເພີ້ມເຕີມ.ເພື່ອຣາຍຣະອຽດເພີ້ມເຕີມ,ແວ່ເຂົ້າປັຽມ **hca.wa.gov/apple-health.**

## ຂ້ອຍສາມາດຮ້ອງຂໍເອົາ **Apple Health** ໄດ້ບໍ່ໃນຂະນະທີ່ຂ້ອຍມີການຄຸ້ມກັນ **Family Planning Only** ຢູ່?

ໄດ້,ທ່ານສາມາດຮ້ອງຂໍເອົາການຄຸ້ມກັນ Apple Health ເຕັມຄົບຊຸດໄດ້ໃນທຸກໆເວລາ.

## ຂ້ອຍຈະຮູ້ຈັກໄດ້ແນວໃດວ່າຂ້ອຍຈະຖືກອະນຸມັດຫລືບໍ່ແລະເມື່ອໃດການຄຸ້ມກັນຂອງຂ້ອຍຈະເລີ້ມຕົ້ນ?

ທ່ານຈະໄດ້ຮັບການແຈ້ງການຈາກ Health Care Authority (HCA) ໂດຍທາງໄປສະນີ.ຖ້າຫາກວ່າຖືກອະນຸມັດ, ການຄຸ້ມກັນຈະເລີ້ມຕົ້ນໃນວັນທຳອິດຂອງເດືອນທີ່ທ່ານໄດ້ຮ້ອງຂໍເອົາ.



**ຂ້ອຍສາມາດໄດ້ຣາຍຣະອຽດເພີ້ມເຕີມໄດ້ຢູ່ໃສ?**

- ທາງອອນລາຍນ໌: **hca.wa.gov/family-planning**
- ອີເມລ໌: **hcafamilyplanning@hca.wa.gov**
- ໂທຣະສັບ: 1-800-562-3022

Washington State Health Care Authority

HCA ປະຕິບັດຕາມກົດຫມາຍສິດທິພົລເມືອງຂອງຣັດຖະບານກາງແລະຂອງຣັດວໍຊິງຕັນທີ່ກ່ຽວຂ້ອງນຳທຸກໆຢ່າງແລະມຸ່ງຫມັ້ນຕໍ່ການເອົາການເຂົ້າເຖິງທີ່ເທົ່າທຽມກັນໃຫ້ເຖິງການບໍຣິການຂອງພວກເຮົາ.ຖ້າຫາກວ່າທ່ານຕ້ອງການການອຳນວຍຄວາມສະດວກ,ຫລືຕ້ອງການເອກສານໃນແບບຮູບຮ່າງຫລືພາສາອື່ນໆ,ກະຣຸນາໂທຫາ 1-800-562-3022 (TRS: 711).

Washington Apple Health

# ການຄຸ້ມກັນ **Family Planning Only (FPO)**

ຈະເຂົ້າຫາການບໍຣິການວາງແຜນຄອບຄົວໄດ້ແນວໃດ.



HCA 13-0073 LA (3/25) Laotian

## ເປັນຫຍັງຂ້ອຍຈຶ່ງຄວນຈະຮ້ອງຂໍເອົາ Family Planning Only (FPO)?

ທ່ານຄວນຈະຮ້ອງຂໍເອົາຖ້າຫາກວ່າທ່ານເປັນ:

- ບໍ່ຖືກຮັບປະກັນແລະຢູ່ໃນຄວາມຕ້ອງການການວາງແຜນຄອບຄົວ (ການຄຸມກຳເນີດ/ວິທີການຄວບຄຸມການເກີດ) , **ຫລ**
- ຖືກຮັບປະກັນແລະເປັນຜູ້ເຄາະຮ້າຍຂອງຄວາມຮຸນແຮງໃນຄອບຄົວຫລືອາຍຸຕ່ຳກວ່າ 18 ປີແລະຊອກເອົາການວາງແຜນຄອບຄົວທີ່ຖືກປົກປິດໄວ້ເປັນຄວາມລັບ.

### ການບໍລິການແນວໃດແດ່ທີ່ຖືກຄຸ້ມກັນ?

- ການສຶກສາເຣື່ອງການວາງແຜນຄອບຄົວແລະການປຶກສາເຣື່ອງການລຸດຜ່ອນການສ່ຽງລົງ
- ວິທີການຄຸມກຳເນີດທີ່ຖືກອະນຸມັດໃຫ້ໂດຍ FDA ທຸກໆຢ່າງລວມເອົາ:ຢາເມັດ,ແຜນຕິດ,ບ້ວງ,ຢາສັກ, IUDs, ເຂັມຝັງ, ບ້ວງໃສ່ຊ່ອງຄອດ,ປອກອານາມັຍ,ແລະຢາຂ້ານ້ຳເຊື້ອ (ໂຟມ, ຄຣີມ,ແຈລ໌) ,ແລະວິທີຄຸມກຳເນີດສຸກເສີນ.
- ການສຶກສາແລະເຄື່ອງໃຊ້ສອຍສຳລັບການວາງແຜນຄອບຄົວຕາມທັມມະຊາດແລະການບັງຄັບໃຈຕົນເອງ
- ວິທີການຄຸມກຳເນີດຖາວອນ:ການອັດທ (“ທໍ່ນ້ຳເຊື້ອຖືກມັດ”) , ການເຣັດໝັນ,ແລະການຕັດທໍ່ນ້ຳເຊື້ອ
- ການກັ່ນກອງແລະການປິ່ນປົວລັບການເປັນອັກເສບຖ່າຍທອດທາງເພດ (STI)
- ການກັ່ນກອງເບິ່ງມະເລງໃນມົດລູກແລະການກວດເບິ່ງການຖືພາໃນເວລາເໝາະສົມ
- ການປັຽນຫ້ອງການໝໍໂດຍກົງທີ່ກ່ຽວພັນນຳບັນຫາເຣື່ອງການວາງແຜນຄອບຄົວເມື່ອເວລາຈຳເປັນຕ້ອງໄດ້ປິ່ນປົວ
- ການສັກຢາກັນໂຣກ Human papillomavirus (HPV) ແລະ Hepatitis B.

### ຂ້ອຍສາມາດໄດ້ຮັບການບໍລິການປິ່ນປົວຢູ່ໃສ?

ທ່ານສາມາດໄດ້ຮັບການບໍລິການວາງແຜນຄອບຄົວໄດ້ຢູ່ນຳບ່ອນບໍລິການ Apple Health ທີ່ມີເງື່ອນໄຂທຸກໆບ່ອນ.

ຢາຄຸມກຳເນີດ (OTC) ຂາຍຕາມຫ້າງເຊັ່ນວ່າປອກອະນາມັຍ,ຢາຂ້ານ້ຳເຊື້ອ (ໂຟມຄຸມກຳເນີດ,ຄຣີມ,ແຈລ໌) ,ຢາຄຸມກຳເນີດສຸກເສີນ (ຢາເມັດ { ຕອນເຊົ້າຫລັງຈາກມື້ນັ້ນ { ,ແລະຢາກິນຄຸມກຳເນີດ (ຢາເມັດຄຸມກຳເນີດ) ມີໄວ້ໃຫ້ຕາມຮ້ານຂາຍຢາໂດຍບໍ່ມີໃບສັ່ງຊື້.

### ຂ້ອຍສາມາດຊອກຫາບ່ອນບໍລິການບ່ອນທີ່ມີການບໍລິການວາງແຜນຄອບຄົວໄວ້ໃຫ້ໄດ້ຢູ່ໃສ?

ທ່ານສາມາດຊອກຫາລາຍຊື່ຂອງບ່ອນບໍລິການ Apple Health ໄດ້ທີ **https:/fortress.wa.gov/hca/p1findaprovider/** ເພື່ອຈະຮ້ອງຂໍເອົາການຊ່ວຍເຫລືອທາງໂທຣະສັບ,ຫລືໂດຍຕົນເອງ.

### ຂ້ອຍມີເງື່ອນໄຂໄດ້ຮັບບໍ່?

ທ່ານຕ້ອງສອດຄ່ອງນຳຂອບເຂດຣາຍໄດ້ ແລະແມ່ນບໍ່ວ່າຈະ:

- ບໍ່ຖືກຮັບປະກັນແລະບໍ່ມີເງື່ອນໄຂໄດ້ຮັບການຄຸ້ມກັນ Apple Health (Medicaid), **ຫລື**
- ຖືກຮັບປະກັນແລະຊອກຫາການບໍລິການວາງແຜນຄອບຄົວທີ່ຖືກປົກປິດໄວ້ເປັນຄວາມລັບ.

### ຂ້ອຍຈະຮ້ອງຂໍເອົາການຄຸ້ມກັນໄດ້ແນວໃດ?

ເພື່ອຈະຮ້ອງຂໍເອົາການຄຸ້ມກັນ Family Planning Only, ຈົ່ງດາວນ໌ໂຫລດໃບຄຳຮ້ອງຂໍໄດ້ທີ່ **hca.wa.gov/family-planning**.

ຍື່ນໃບຄຳຮ້ອງຂໍຂອງທ່ານເຂົ້າມາທາງ:

- ແຟກຊ໌: 1-866-841-2267
- ອີແມລ໌: **apple@hca.wa.gov**
- ໄປສະນີ: HCA MEDS<br>PO Box 45531<br>Olympia, WA 98504-5531

ທ່ານຍັງສາມາດຮ້ອງຂໍເອົາໄດ້ທັງໂທຣະສັບອີກຄືກັນໄດ້ທີ 1-800-562-3022 ext. 12533.

ການບໍລິການທີ່ຖືກປົກປິດໄວ້ເປັນຄວາມລັບຈະມີໄວ້ໃຫ້ສຳລັບຊາວໜຸ່ມວັຍສິບກວາປີແລະຜູ້ເຖົ້າຜູ້ເຄາະຮ້າຍຂອງຄວາມຮຸນແຮງໃນຄອບຄົວ ຖ້າຫາກວ່າທ່ານຕ້ອງການການບໍລິການທີ່ຖືກປົກປິດໄວ້ເປັນຄວາມລັບ,ຕິດຕໍ່ຫາບ່ອນບໍລິການ Apple Health ຂອງທ່ານເພື່ອຈະຮ້ອງຂໍເອົາການຊ່ວຍເຫລືອທາງໂທຣະສັບ,ຫລືໂດຍຕົນເອງ.

### ຂອບເຂດຂອງຣາຍໄດປະຈຳເດືອນັສຳລັບ 2025 Family Planning Only ເທົ່ານັ້ນ

| | | | |
|---|---|---|---|
| ຄົນດຽວ | ຄອບຄົວ 2 ຄົນ | ຄອບຄົວ 3 ຄົນ | ຄອບຄົວ 4 ຄົນ |
| $3,456 | $4,672 | $5,886 | $7,099 |
| ຄອບຄົວ 5 ຄົນ | ຄອບຄົວ 6 ຄົນ | ຄອບຄົວ 7 ຄົນ | ຄອບຄົວ 8 ຄົນ |
| $8,316 | $9,529 | $10,743 | $11,959 |

ຈຳນວນຣາຍໄດ້ເລີ້ມຕົ້ນຕັ້ງແຕ່ເດືອນເອໂປຣ 1, 2025 ໄປຮອດເດືອນມາກຊ 31, 2026.